British Embassy
Vientiane

ສະຖານທູດອັງກິດ ປະຈຳນະຄອນຫຼວງວຽງຈັນ
ຖະໜົນ ເນຣູ
ບ້ານ ໂພນໄຊ,
ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
+856 (0)30 770 0000
BritishEmbassy.Vientiane@fco.gov.uk

<u>**ບົດຂ່າວ**</u>

**ວັນສຸກ, ທີ່ 27 ເດືອນ ກຸມພາ 2015** **ສຳລັບການເຜີຍແຜ່ໂດຍທັນທີ**

# ທ່ານ ທູດອັງກິດເຂົ້າຮ່ວມງານ ລົດຈາກົ່ວ ທີ່ ສປປ ລາວ

## ພະນະທານ ຟິນລິບ ມັນໂລນ ເອກອັກຄະລາຊາທູດ ລາດຊະອານາຈັກ ອັງກິດ ປະຈຳ ລາວ

ໄດ້ໃຫ້ຄຳໂອວາດໃນງານຖະແຫຼງຂ່າວ ຕົວແທນຈຳໜ່າຍ ຈາກົ່ວ ຢ່າງເປັນທາງການ ທີ່ນະຄອນຫຼວງວຽງຈັນ.

ລົດຈາກົ່ວໄດ້ກ້າວເຂົ້າສູ່ ຕະຫຼາດລົດ ລາວຢ່າງເປັນທາງການ ໃນວັນທີ່ 27 ເດືອນ ກຸມພາ ທີ່ໄດ້ຈັດຂຶ້ນທີ່ ໂຮງແຮມ ດອນຈັນ ພາເລດ.

ຕາງໜ້າກຸ່ມ ບໍລິສັດ ອາເອັມເອ ລາວ ໂດຍ ລາວ ແລນ ໂຣເວີ ກັບການນຳ  ລົດ ຈາກົ່ວ ເຊິ່ງແມ່ນໜຶ່ງໃນສັນຍາລັກ ຂອງລົດຫຼູຫຼາ ຈາກ ປະເທດອັງກິດເຊິ່ງເປັນທີ່ພາກພູມໃຈທີ່ໄດ້ເປັນຜູ້ຜະລິດ ລົດສະປອດສ໌ ທີ່ມີຄວາມສະຫງ່າງາມ ທີ່ສຸດລະດັບໂລກ ແລະ ຍັງເປັນລົດທີ່ປະສົບຜົນສຳເລັດຢ່າງຍາວນານ.

ຫຼາຍກວ່າ 90  ປີ ຈາກົ່ວ ເປັນຜູ້ຜະລິດລົດລາຍໃຫຍ່ທີ່ສຸດ ຂອງປະເທດອັງກິດ ເຊິ່ງມີພະນັກງານຫຼາຍກວ່າ 24,000 ຄົນ ຍ້ອນການອອກແບບ ແລະ ການນຳໃຊ້ເຕັກໂນໂລຢີ ເຂົ້າໃນການຜະລິດ ຈິ່ງເຮັດໃຫ້ ຈາກົ່ວ ປະສົບຜົນສຳເລັດຢ່າງມະຫາສານ.

***ໃນມື້ດັ່ງກ່າວ, ພະນະທານ ຟິນລິບ ມັນໂລນ ເອກອັກຄະລາຊາທູດ ແຫ່ງລາດຊະອານາຈັກ ອັງກິດ ປະຈຳ ລາວ ໄດ້ເວົ້າວ່າ:***

“   ໂຮງງານໃນສະຫະລາຊາອານາຈັກ ອັງກິດ ມີປະຫວັດອັນຍາວ ເມື່ອຍ້ອນໄປຈຸດເລີ້ມຕົ້ນຂອງການປະຕິວັດອຸດສາຫະກຳໃນສະໃໝນັ້ນເຊິ່ງບາງຄົນອາດຄິດວ່າ ຄົນອັງກິດເກັ່ງໃນຫຼາຍດ້ານບໍ່ວ່າຈະເປັນ: ການຜະລິດຂັ້ນສູງ (ເຊັ່ນ: ເຮືອບິນ, ຍານອະວາກາດ, ລົດ, ສານເຄມີ ແລະ ພະລັງງານ), ໂຄງສ້າງພື້ນຖານທີ່ດີ, ການເບິ່ງແຍງສຸຂະພາບທີ່ດີ, ວິທະຍາສາດ ແລະ ການປ້ອງກັນຄວາມສະຫງົບ, ອຸປະກອບຮັກສາຄວາມປອດໄພ ແລະ ຈາກົ່ວກໍ່ໄດ້ເປັນຕົວຢ່າງໜຶ່ງຈາກໝາກຜົນຂອງໂຮງຈັກໂຮງງານຂອງຄົນອັງກິດທີ່ໜ້າຍ້ອງຍໍ ແລະ ນອກເໜືອຈາກນັ້ນສະຫະລາຊາ

ອານາຈັກ ອັງກິດ ຍັງເປັນໜຶ່ງໃນຜູ້ຜະລິດລົດທີ່ມີປະສິດທິພາບໃນຂົງເຂດ ຢູໂຣບ ແລະ ຍັງເປັນຜູ້ຜະລິດລົດຫລູ ລາຍ ໃຫຍ່ທີ່ສຸດເປັນອັນດັບ 2 ຂອງໂລກອີກດ້ວຍ.

" ການຜະລິດແມ່ນຫົວໃຈຫຼັກທາງເສດຖະກິດຂອງ ລາຊາອານາຈັກ ອັງກິດ ເຊິ່ງໄດ້ສ້າງສັນນະວັດຕະກໍາ ແລະ ສົ່ງອອກສິນຄ້າທີ່ມີຄຸນນະພາບສູງ ໄປທົ່ວທຸກມຸມໂລກ ແລະ ຄິດໄລ່ເປັນອັດຕາສ່ວນຫຼາຍກວ່າເຄິ່ງໜຶ່ງຂອງການສົ່ງ ອອກ ຫຼື ປະມານ 10% ຂອງ GDP, ດັ່ງນັ້ນ ການຜະລິດຂອງປະເທດອັງກິດຈຶ່ງມີຄວາມຈະເລີນຮຸ່ງເຮືອງ ແລະ ມີ ບົດບາດສໍາຄັນຕໍ່ການຂະຫຍາຍຕົວທາງເສດຖະກິດຂອງປະເທດ. ຈາກົວ ແລະ ແລນໂຣເວີ ກໍ່ເປັນສ່ວນສໍາຄັນໜຶ່ງ ຂອງ ການເຕີບໂຕ ແລະ ຜົນສໍາເລັດນີ້."

ຕິດຕໍ່:

**ເທຼຊີ ບຣູກຊໍ, ເຈົ້າໜ້າທີ່ດ້ານການສື່ສານ ແລະ ນະໂຍບາຍ**

ສະຖານທູດອັງກິດ ປະຈໍາ ນະຄອນຫຼວງວຽງຈັນ. ອີເມວ: tracy.brookshaw@fco.gov.uk ໂທລະສັບ: 020 9554 0271